SOMSAMONE et al. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521-0653. Vol. 6, Issue 1: Page 162 - 168.

ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 1, ມັງກອນ-ມິຖຸນາ 2020, ເລກທະບຽນ ISSN 2521-0653

# ການຄຸ້ມຄອງການໃຫ້ບໍລິການທຸລະກິດໂຮງແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ[1]

**ວິໄລພອນ ສົມສະໜມອນ [2], ອໍລະໄທ ສີສະຫວັນ, ແສງອາລຸນ ສຸນທະລີ, ສຸກສະໜມອນ ແສງຈັນ, ຂັນທະລີ ມີໄຊກອນ, ແລະ ບົວລອຍ ອິນທະຈັກ**

*ພາກວິຊາ ບໍລິຫານການທ່ອງທ່ຽວ ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລ ສຸພານຸວົງ*

**ບົດຄັດຫຍໍ້**

ທຸລະກິດທີ່ພັກແຮມເປັນອົງປະກອບຫລັກທີ່ສະໜັບສະໜູນການທ່ອງທ່ຽວໃນແຂວງຫລວງພະບາງ ການດຳເນີນທຸລະກິດບໍລິການທີ່ພັກແຮມເປັນສ່ວນຊ່ວຍສົ່ງເສີມ, ຂະຫຍາຍ ແລະ ເຜີຍແຜ່ຄວາມເປັນລັກສະນະຂອງທ້ອງຖິ່ນ ຜ່ານການປະດິດສ້າງນະວັດຕະກຳເພື່ອສະໜັບສະໜູນໃຫ້ເກີດການຂັບເຄື່ອນທາງດ້ານການມີສ່ວນຮ່ວມໃນການປະຕິບັດນະໂຍບາຍການບໍລິຫານຈັດການໂຮງແຮມ.

ຜົນການສຶກສາດ້ານການຄຸ້ມຄອງຂອງພາກລັດແມ່ນເປັນໄປຕາມທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໃນດຳລັດ, ຂໍ້ກຳນົດ ແລະ ນິຕິກຳວ່າດ້ວຍການຄຸ້ມຄອງທຸລະກິດການທ່ອງທ່ຽວ ເຊິ່ງໃນແຂວງຫຼວງພະບາງແມ່ນພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວເປັນພະແນກທີ່ມີບາດບົດໃນການຄຸ້ມຄອງໂດຍສົມທົບກັບຫ້ອງການມໍລະດົກໂລກຫຼວງພະບາງ ແລະ ພະແນກການອ້ອມຂ້າງລວມເຖິງນາຍບ້ານທີ່ທຸລະກິດຕັ້ງຢູ່.

ຜົນການສຶກສາດ້ານຄວາມຄິດເຫັນຂອງພາກທຸລະກິດໂຮງແຮມຕໍ່ການບໍລິຫານຄຸ້ມຄອງຂອງພາກລັດໂດຍລວມຢູ່ໃນລະດັບ “ປານກາງ” (3.36, S.D = 1.09). ການວາງແຜນໃນລະດັບ “ຫຼາຍ” (3.42; S.D = 1.09). ຄວບຄຸມໃນລະດັບ “ຫຼາຍ”, (3.44; S.D = 1.10). ການຈັດຕັ້ງໃນລະດັບ “ປານກາງ” (3.32; S.D = 1.12). ນຳ ໃນລະດັບ “ປານກາງ”, (3.27; S.D = 1.11).

ເພື່ອໃຫ້ເກີດຄວາມຍືນຍົງໃນການຄຸ້ມຄອງທຸລະກິດໂຮງແຮມໃນຫຼວງພະບາງແມ່ນເປັນໄປໄດ້ທັງ 4 ດ້ານ ໄດ້ແກ່: ດ້ານການວາງແຜນ, ການຄວບຄຸມ, ການຈັດຕັ້ງອົງກອນ ແລະ ຂະບວນການນຳພາ ຂອງການບໍລິຫານພາກລັດໃນການຄຸ້ມຄອງທຸລະກິດໂຮງແຮມໃນນະຄອນຫຼວງພະບາງ. ໂດຍສະເພາະເພື່ອໃຫ້ເກີດຄວາມຍືນຍົງໃນການຄຸ້ມຄອງທຸລະກິດໂຮງແຮມນັ້ນ ການຄົ້ນຄວ້າຄັ້ງນີ້ຄົ້ນພົບແນວທາງ ດັ່ງນີ້: 1. ເພື່ອເອົາຕົວລອດຈາກຄວາມຍືນຍົງໃນການແກ້ໄຂບັນຫາຢ່າງທັນກາ; 2. ເພີ່ມຄວາມປະສານງານຮ່ວມມືລະຫວ່າງພາກລັດ ແລະ ທຸລະກິດໂຮງແຮມຢ່າງເຂັ້ມແຂງ; 3. ປູກຈິດສຳນຶກເພື່ອໃຫ້ທຸລະກິດໂຮງແຮມເຫັນຄວາມສຳຄັນຂອງການຄຸ້ມຄອງຂອງພາກລັດ; 4. ພັດທະນາບຸກຄະລາກອນພາກລັດໃນແງ່ຄວາມຊ່ຽວຊານທາງດ້ານການຄຸ້ມຄອງທຸລະກິດຢ່າງພຽງພໍ; 5. ທົບທວນການກວດສອບມາດຕະຖານອາຊຽນກັບທຸລະກິດໂຮງແຮມໃນຂັ້ນສາມດາວລົງມາ ແລະ 6. ຄວາມຮັດກຸມທາງດ້ານການວາງຂອບ POLC ທີ່ຊັດເຈນ.

ຂໍ້ສະເໜີຈາກການຄົ້ນຄ້ວາໃນຄັ້ງນີ້ໄດ້ແກ່: ພາກລັດຄວນສ້າງທີມລົງເກັບກຳຂໍ້ມູນປະເມີນຜົນການຈັດຕັ້ງປະຕິບັດການຄຸ້ມຄອງທຸລະກິດໂຮງແຮມໃນແຕ່ລະໄລຍະຕາມຄວາມເໝາະສົມ. ນອກນັ້ນ, ພາກລັດຈຳເປັນຕ້ອງເພີ່ມປະລິມານ ແລະ ຄຸນະພາບທີ່ລົງເລິກໄປທາງດ້ານຊ່ຽວຊານສະເພາະດ້ານໃນຂະ ແໜງໂຮງແຮມເພື່ອສາມາດລົງໃກ້ຊິດຕິດແທດກັບການປະຕິບັດວຽກຕົວຈິງກັບແຕ່ລະໂຮງແຮມ. ແລະ ພະຍາຍາມຜັກດັນໃຫ້ເກີດການປະສານຮ່ວມມືລະຫວ່າງພາກທຸລະກິດເອງເພື່ອຫຼີກເວັ້ນປະກົດການແຂ່ງຂັນພາຍໃນລະຫວ່າງກັນໂດຍສະເພາະແມ່ນເລື່ອງການກຳນົດລາຄາທີ່ພັກແຮມ. ສຸດທ້າຍ, ການຈັດມາດຕະຖານໂຮງແຮມແມ່ນຂຶ້ນກັບຂັ້ນກະຊວງ ແລະ ຂັ້ນແຂວງ ສະນັ້ນເຮັດໃຫ້ການຄຸ້ມຄອງເບິ່ງເປັນລັກສະນະກະຈາຍ ແລະ ມີລັກສະນະຈຳກັດ.

**ຄຳສຳຄັນ:** ການບໍລິຫານພາກລັດ, ການວາງແຜນ, ການຈັດຕັ້ງ, ການຄວບຄຸມ, ການຊີ້ນຳນຳ

---

[1] ***ການອ້າງອີງພາສາລາວ***: ວິໄລພອນ ສົມສະໜມອນ ແລະ ຄະນະ . (2020). **ການຄຸ້ມຄອງການໃຫ້ບໍລິການທຸລະກິດໂຮງແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ**, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ເລກທະບຽນ ISSN 2521-0653, ສະບັບທີ: 6, ເຫຼັ້ມທີ 1, ໜ້າທີ: 162 - 171.*

[2] ***ຕິດຕໍ່ພົວພັນ:***

*ວິໄລພອນ ສົມສະໜມອນ, ພາກວິຊາ ບໍລິຫານການທ່ອງທ່ຽວ ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລ ສຸພານຸວົງ,*

*Tel: +856 02055805155, E-mail: v_somsamone@yahoo.com*

# The Public Administration of Hotel Businesses in LuangPrabang City, Luangprabang Province.

**Vilayphone SOMSAMONE[3], Orlathai SISAVANH, SengAloun SOUNTHALY, Souksamone SENGCHANH, Khanthaly MIXAYKONE and Bualoy INTHAJACK**

*Department of Tourism, Faculty of Economics and Tourism, Souphanouvong University.*

**ABSTRACT**

The hotel business is a major component, which becomes a driving force of tourism sector in Luang Prabang. The hotel service businesses, a key sector, has promoted, expanded and disseminated unique local values through the development of new innovation to assistdriving hotel management practices.

Public sector management studies are in line with the roles, jurisdictions and duties as specified in the Decree on Tourism Business Management, which in Luang Prabang, the Department of Information, Culture and Tourismhas an important role in managing the hotel mangagement in cooperation with LuangPrabang Heritage Office as well as related provincial departments.

The overall performance of the hotel business towards the public administration was "moderate" (3.36, S.D = 1.09). Planning on a "high" level (3.42; S.D = 1.09). Controlled by "very high" levels, (3.44; S.D = 1,10). Organizations rated "moderate" (3.32; S.D = 1.12). With "Moderate", (3.27; S.D = 1,11).

In order to ensure the sustainable management of the hotel business in Luang Prabang, there are four possible aspects: planning, control, organization and leadership of the public administration in the hotel business in Luang Prabang. Specifically, for the sustainability of the hotel business, this research has found the following: 1. To survive the crisis in a timely manner; 2. To strengthen public-private partnerships related to hotel business; 3. To raise awareness, thus the hotel business operators recognize the importance of public sector management; 4. To develop public sector personnel who have sufficient business management expertises; 5. To review ASEAN Standard Checks with the Three-Star Hotel Business and 6. To provide clear POLC Framework Orientation.

Proposals from this research include: The public sector should establish a data collection team to evaluate the implementation of the hotel business management periodically. In addition, the public sector needs to increase the quantity and quality of the specialists who can closely monitor the operation of each hotel. Additionally, those can encourage the close cooperation among the businesses to avoid inter-company competition, especially when it comes to hotel pricing. Finally, the standardization of the hotel primarily depends on the ministry and the provincial levels, leading to hotel management fragmented and limited.

**Keywords:** public administration, planning, organizing, Controlling, Leading

[3] ***Correspondence:***

*Vilayphone SOMSAMONE, Department of Economics and Tourism, Faculty of Economics and Tourism, Souphanouvong University, E-mail: v_somsamone@yahoo.com. Tel: +856 020 55805155*

**1. ພາກສະເໜີ**

ທຸລະກິດທີ່ພັກແຮມເປັນອີງປະກອບຫລັກທີ່ສະໜັບສະໜູນການທ່ອງທ່ຽວໃນ ແຂວງຫຼວງພະບາງ ການດຳເນີນທຸລະກິດບໍລິການທີ່ພັກແຮມເປັນສ່ວນຊ່ວຍສົ່ງເສີມ, ຂະຫຍາຍ ແລະ ເຜີຍແຜ່ຄວາມເປັນລັກສະນະຂອງທ້ອງ ຖິ່ນຜ່ານການປະດິດສ້າງນະວັດຕະກຳເພື່ອສະໜັບສະໜູນໃຫ້ເກີດການຂັບເຄື່ອນທາງດ້ານການມີສ່ວນຮ່ວມໃນການປະຕິບັດນະໂຍ ບາຍການບໍລິຫານຈັດການໂຮງແຮມ. ຜ່ານເຄື່ອງມື POSDCoRB ໂດຍການເນັ້ນໄປທາງດ້ານການແບ່ງວຽກ, ການປະສານງານ, ການຈັດແຜນງານ ໂດຍອີງຕາມວັດຖຸປະສົງ, ຂະບວນການ, ຄົນ ແລະ ສະຖານທີ່. ຄວາມມີປະສິດທິພາບເປັນເລື່ອງສຳຄັນທີ່ສຸດຂອງການບໍລິຫານສຳລັບດ້ານການຈູງໃຈຄົນເຮັດວຽກເພື່ອໃຫ້ຖືກຕ້ອງກັບຈຸດປະສົງທີ່ອີງການຕັ້ງເປົ້າໝາຍໄວ້, ຄຽງຄູ່ກັບການມີໂຄງສ້າງອົງກອນທີ່ແຂງແຮງ ເພື່ອໃຫ້ເກີດການເຮັດວຽກຮ່ວມກັນຂອງທຸກພາກສ່ວນ. ໂຮງແຮມໃນນະຄອນຫຼວງພະບາງມີຈຳນວນ 477 ແຫ່ງ ໃນປີ 2018, ສາມາດໃຫ້ບໍລິການຫ້ອງພັກໄດ້ 1987 ຫ້ອງ (ສະຖິຕິຈາກພະແນກຖະແຫຼງຂ່າວ,ວັດທະນາທຳ ແລະ ທ່ອງທ່ຽວ, 2019). ລັກສະນະການບໍລິຫານງານພາກລັດຕໍ່ກັບທຸລະກິດໂຮງແຮມໃນຫຼວງພະບາງແມ່ນຂຶ້ນສາຍຕົງກັບພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ຊີ້ນຳໂດຍກົງແມ່ນຂະແໜງທ່ອງທ່ຽວທີ່ຕິດພັນກັບຫ້ອງການມໍລະດົກ ແລະ ພະແນກການອ້ອມຂ້າງໄດ້ແກ່: ພະແນກຊັບພະຍາ ກອນ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກສ່ວຍສາອາກອນ ແຂວງຫຼວງພະບາງ, ຫ້ອງວ່າການແຂວງ, ພະແນກໂຍທາທິການ ແລະ ການຂົນສົ່ງ, ຕຳຫຼວດທ່ອງທ່ຽວ, ນາຍບ້ານທີ່ໂຮງແຮມຕັ້ງຢູ່.

ການຄົ້ນຄວ້າຄັ້ງນີ້ແມ່ນເພື່ອ 1) ສຶກສາການຄຸ້ມຄອງຂອງພາກລັດ ແລະ ຮູບແບບການໃຫ້ບໍລິການຂອງທຸລະກິດໂຮງແຮມ ໃນນະຄອນຫຼວງພະບາງ; 2) ຄວາມຄິດເຫັນຂອງຜູ້ປະກອບທຸລະກິດໂຮງແຮມທີ່ມີຕໍ່ການຄຸ້ມຄອງການໃຫ້ບໍລິການທຸລະກິດໂຮງແຮມຂອງພາກລັດໃນນະຄອນ ຫຼວງພະບາງ; 3) ຂໍ້ສະເໜີຕໍ່ກັບພາກລັດໃນການຄຸ້ມຄອງການໃຫ້ບໍລິການທຸລະກິດໂຮງແຮມໃນນະຄອນຫຼວງພະບາງ ໃຫ້ມີຄວາມຍືນຍົງ.

**2. ເຄື່ອງມື ແລະວິທີການຄົ້ນຄວ້າ**

**2.1 ເຄື່ອງມືໃນການເກັບຂໍ້ມູນ**

ແບບສອບຖາມຖືກໃຊ້ເຂົ້າໃນການສຶກສາຄົ້ນຄວ້າໃນຄັ້ງນີ້ ໄດ້ມີການນຳນົດແບບສອບຖາມອອກເປັນ 4 ພາກສ່ວນຄື: 1: ແມ່ນຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ. 2: ແມ່ນຂໍ້ມູນກ່ຽວກັບການໃຫ້ບໍລິການຂອງບັນດາທຸລະກິດໂຮງແຮມໃນນະຄອນຫຼວງພະບາງ. 3: ແມ່ນຂໍ້ມູນກ່ຽວກັບການຄຸ້ມຄອງການດຳເນີນການໃຫ້ບໍລິ ການຂອງທຸລະກິດທີ່ພັກແຮມ. 4: ຄວາມຄິດເຫັນຂອງຜູ້ປະກອບການທຸລະກິດໂຮງແຮມກ່ຽວກັບແນວທາງໃນການຄຸ້ມຄອງທຸລະກິດໂຮງແຮມຂອງພາກສ່ວນລັດ ແລະ ຄວາມຄິດເຫັນເພີ່ມເຕີມດ້ານອື່ນໆຂອງຜູ້ປະກອບການທຸ ລະກິດບໍລິການໂຮງແຮມ.

ການເກັບຂໍ້ມູນທາງດ້ານຄຸນນະພາບດ້ວຍວິທີການສຳພາດແມ່ນໄດ້ເກັບຈາກ 5 ພາກສ່ວນ ເຊິ່ງໄດ້ກຳນົດໂຄງສ້າງແບບສຳພາດອອກເປັນ 4 ດ້ານຄື: 1) ການວາງແຜນໃນການຄຸ້ມຄອງການດຳເນີນທຸລະກິດບໍລິການລູກຄ້າຂອງບັນດາໂຮງແຮມພາຍໃນນະຄອນຫຼວງພະບາງ. 2) ການຈັດຕັ້ງປະຕິບັດການຄຸ້ມຄອງການດຳເນີນທຸລະກິດບໍລິການລູກຄ້າຂອງບັນດາໂຮງແຮມພາຍໃນນະຄອນຫຼວງພະບາງ. 2) ການຊີ້ນຳ-ນຳພາຂອງພາກສ່ວນລັດໃນການຄຸ້ມຄອງການດຳເນີນທຸລະກິດບໍລິການລູກຄ້າຂອງບັນດາໂຮງແຮມພາຍໃນນະຄອນຫຼວງພະບາງ. 3) ການຄວບຄຸມຂອງພາກສ່ວນລັດໃນການດຳເນີນທຸລະກິດບໍລິການລູກຄ້າຂອງບັນດາໂຮງແຮມພາຍໃນນະຄອນຫຼວງພະບາງ.

**2.2 ວິທີການຄົ້ນຄວ້າ**

ກຸ່ມຕົວຢ່າງເຂົ້າໃນການສຶກສາໃນຄັ້ງນີ້ແມ່ນໄດ້ກຳນົດເອົາຜູ້ປະກອບການທຸລະກິດໂຮງແຮມໃນນະຄອນຫຼວງພະບາງຈຳນວນ 58 ແຫ່ງ ແລະ ພາກສ່ວນລັດທີ່ກ່ຽວຂ້ອງກັບວຽກການຄຸ້ມຄອງທຸລະກິດໂຮງແຮມໃນນະຄອນຫຼວງພະບາງຈຳນວນ 5 ກຸ່ມຕົວຢ່າງ ເຊິ່ງໄດ້ນຳໃຊ້ຮູບແບບການສຸ່ມກຸ່ມຕົວຢ່າງແບບຕາຕາລາງຂອງທ່ານ Taro Yamane 1970 ໄດ້ກຳນົດໄວ້ ຈາກກຸ່ມປະຊາກອນຂອງການສຶກສາກຸ່ມຕົວຢ່າງແມ່ນໜ້ອຍກວ່າ 100% ແລະ ຕົກຢູ່ໃນເກນການກຳນົດລະຫວ່າງ (1-99%).

**3. ຜົນໄດ້ຮັບ**

**ດ້ານການສຶກສາການບໍລິຫານຄຸ້ມຄອງຂອງພາກລັດຕໍ່ກັບທຸລະກິດໂຮງແຮມ ດ້ານການວາງແຜນ,ການຈັດຕັ້ງອົງການ, ການຊີ້ນຳ-ນຳພາ ແລະ ການຄວບຄຸມ**

ຈາກຜົນການຄົ້ນຄວ້າສາມາດສະຫຼຸບໄດ້ວ່າ:

1. ດ້ານການວາງແຜນ. ພາກລັດແມ່ນໄດ້ດຳເນີນແຜນປະຕິທິນການເຮັດວຽກໃຫ້ເປັນໄປຕາມທິດທາງແຜນລວມທີ່ທາງກະຊວງໄດ້ກຳນົດມາໃນແຜນຍຸດທະສາດໄລຍະສັ້ນ ແລະ ໄລຍະຍາວ ຂອງການພັດທະນາການທ່ອງໃນແຕ່ລະໄລຍະ. ເຊິ່ງໃນກໍລະນີການສຶກສາຂອງການສຶກສາຂອງ ນະຄອນຫຼວງພະບາງ ແມ່ນໄດ້ປະຕິບັດພາລະບົດບາດຕາມການປະສານງານຮ່ວມມືລະຫວ່າງຂັ້ນສູນກາງ ແລະ ພາກທຸລະກິດ ດ້ວຍການປະຕິບັດແຜນຍຸດທະສາດສະເພາະທີ່ເຈາະຈົງການພັດທະນາການທ່ອງທ່ຽວໃນນະຄອນຫຼວງພະບາງຕາມແຜນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວສ່ວນໃຫຍ່ຈະກຳນົດຕາມທິດລວມທີ່ກະຊວງວາງມາໃນ

ໄລຍະເວລາ 10 ປີ. ລວມໄປເຖິງ, ການມີການແບ່ງຂັ້ນຄຸ້ມຄອງທີ່ເປີດໂອກາດໃຫ້ທຸກພາກສ່ວນໄດ້ເຂົ້າມາມີສ່ວນຮ່ວມໃນການລົງກວດກາ, ຕິດຕາມ ແລະ ປະເມີນຜົນແຜນການທີ່ໄດ້ວາງໄປແລ້ວນັ້ນຢ່າງຊັດເຈນ. ນອກນັ້ນ, ຍັງມີການປະສານຮ່ວມມືກັນລະຫວ່າງທຸກພາກສ່ວນທີ່ກ່ຽວຂ້ອງກ່ຽວກັບຂອດການເຜີຍແຜ່ແຜນງານໃນແຕ່ລະຄັ້ງທີ່ຈະລົງມືປະຕິບັດວຽກ ໃນທີ່ນີ້ບົດບາດຫຼັກແມ່ນພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງຫຼວງພະບາງ. ອີງຕາມຜົນການຄົ້ນຄວ້າພົບວ່າ: ພາກລັດໄດ້ມີການວາງແຜນການຄຸ້ມຄອງທຸລະກິດທີ່ພັກແຮມໄດ້ໃນລະດັບດີພໍສົມຄວນ ເຊິ່ງສັງເກດໄດ້ຈາກການມີແຜນຍຸດທະສາດທີ່ຊັດເຈນ, ການມີນິຕິກຳຄຸ້ມຄອງທີ່ທັນສະໄໝໃຫ້ທ່ວງທັນກັບພາກພື້ນ ແລະ ອາຊີປາຊີຟິກ ແລະ ໃນໂລກ. ພາກທຸລະກິດໂຮງແຮມຈາກຜົນການສຳຫຼວດຄວາມຄິດເຫັນພົບວ່າ: ມີຄວາມຄິດເຫັນຢູ່ໃນລະດັບຫຼາຍ ໂດຍສະເພາະແມ່ນດ້ານການມີສ່ວນຮ່ວມຂອງພາກລັດຕໍ່ກັບການສ້າງແຜນທີ່ມີຄວາມທັນສະ  ໄໝ, ຕົງຕາມວັດຖຸປະສົງທີ່ໂຮງແຮມໄດ້ກຳນົດ, ມີວິທີການຄຸ້ມຄອງແຜນທີ່ດີບໍ່ວ່າຈະເປັນດ້ານແຜນ ແລະ ດ້ານການລົງປະຕິບັດກວດສອບ. ນອກນັ້ນ, ຍັງມີດ້ານທີ່ມີຄວາມຄິດເຫັນທີ່ຢູ່ໃນລະດັບປານກາງເຊັ່ນ: ຄວາມເປັນມາດຕະຖານຂອງແຜນ, ການໃຫ້ການສະໜັບສະໜູນທາງດ້ານງົບປະມານ ແລະ ການມີສ່ວນຮ່ວມຂອງພາກລັດຕໍ່ກັບການວາງແຜນຂອງທຸລະກິດໂຮງແຮມ.

2. ດ້ານການຈັດຕັ້ງການຄຸ້ມຄອງທຸລະກິດໂຮງແຮມທີ່ອີງຕາມທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ຂອງພາກສ່ວນກ່ຽວຂ້ອງທີ່ມີຄວາມຊັດເຈນຂອງພາກລັດ. ພາກລັດໄດ້ມີການຈັດກຳລັງຄົນປະກອບເຂົ້າໃນການຈັດຕັ້ງປະຕິບັດການກວດກາ, ປະເມີນ, ຕິດຕາມເບິ່ງການປະຕິບັດງານໃນທ້າຍປີສາມາດດຳເນີນໄປຕາມແຜນການທີ່ໄດ້ວາງໄວ້ເບື້ອງຕົ້ນ. ຈາກການປະຕິບັດການປະເມີນຜົນການຈັດຕັ້ງປະຕິບັດທີ່ຜ່ານມາແມ່ນໄດ້ມີການໃຊ້ເຄື່ອງມືໃນການວິເຄາະສະພາບແວດລ້ອມພາຍໃນ ແລະ ພາຍນອກຂອງການຈັດຕັ້ງປະຕິບັດວຽກງານການທ່ອງທ່ຽວທີ່ມີລັກສະນະກວາມລວມເອົາທຸກວຽກງານກ່ຽວກັບການທ່ອງທ່ຽວ ເຊິ່ງລວມເອົາຂໍ້ມູນທາງດ້ານການຄຸ້ມຄອງທຸລະກິດໂຮງແຮມເປັນສ່ວນໜຶ່ງໃນນັ້ນ. ຈາກຜົນການສຳຫຼວດການຄຸ້ມຄອງກັບພາກສ່ວນລັດພົບວ່າ: ສຳລັບການຂອບເຂດການຈັດຕັ້ງປະຕິບັດແມ່ນໄດ້ມີການອອກຂໍ້ຕົກລົງກ່ອນທີ່ຈະມີການປະຕິບັດວຽກໃນແຕ່ລະຄັ້ງ ໂດຍມີການແຈ້ງໃຫ້ພາກສ່ວນກ່ຽວຂ້ອງຮັບຊາບ, ລວມໄປເຖິງການສ້າງກິດຈະກຳເພື່ອດຶງດູດນັກທ່ອງທ່ຽວເພື່ອໃຫ້ເກີດຄວາມສົນໃຈເຂົ້າມາທ່ອງທ່ຽວໃຫ້ຫຼາຍຂຶ້ນໃນແຕ່ລະຊ່ວງເທດສະການເພື່ອໃຫ້ຕອບສະໜອງກັບມາດຕະຖານທີ່ອາຊຽນກຳນົດ, ມີການມອບລາງວັນໃຫ້ກັບໂຮງແຮມທີ່ເຂົ້າຮ່ວມ. ນອກນັ້ນ, ຍັງເຮັດໜ້າທີ່ໃນການອຳນວຍຄວາມສະດວກໃຫ້ທຸກພາກສ່ວນທີ່ເຂົ້າມາປະສານວຽກງານ. ສຳລັບຜົນການສຶກສາດ້ານການສຳຫຼວດຄວາມຄິດເຫັນຂອງຜູ້ປະກອບທຸລະກິດທີ່ພັກແຮມທີ່ມີຕໍ່ການບໍລິຫານຄຸ້ມຄອງຂອງພາກລັດແມ່ນຍັງຢູ່ໃນລະດັບປານກາງ. ໃນນັ້ນ, ລະດັບຄວາມຄິດເຫັນຫຼາຍແມ່ນດ້ານມີການຈັດຕັ້ງໜ່ວຍງານກວດກາ, ມີຄວາມສະດວກໃນການເຂົ້າພົວພັນກັບພາກລັດ, ແລະ ມີການເຮັດວຽກຮ່ວມກັນລະຫວ່າງພາກລັດ ແລະ ທຸລະກິດໂຮງແຮມ. ສຳລັບດ້ານທີ່ມີຄວາມຄິດເຫັນໃນລະດັບປານກາງ ແມ່ນການມີໜ່ວຍງານພາກລັດເຂົ້າມາຮັບຜິດຊອບຄຸ້ມຄອງທຸລະກິດໂຮງແຮມ , ການແບ່ງງານໃຫ້ກັບສະມາຄົມທຸລະກິດທີ່ພັກແຮມ, ດ້ານຄວາມຊຳນານຂອງບຸກຄະລາກອນພາກລັດດ້ານການຄຸ້ມຄອງທຸລະກິດທີ່ພັກແຮມ ແລະ ດ້ານຄວາມຫຼາກຫຼາຍທາງດ້ານກິດຈະກຳທີ່ສົ່ງເສີມໃຫ້ແຂກເຂົ້າພັກ.

3. ດ້ານການຊີ້ນຳ-ນຳພາທີ່ອີງຕາມທີ່ຕັ້ງ, ພາລະບົດບາດ, ການແກ້ໄຂບັນຫາ ແລະ ການກະຈາຍຂໍ້ມູນຂ່າວສານໃຫ້ກັບທຸລະກິດໂຮງແຮມ. ກ່ຽວຂ້ອງກັບການອອກລະບຽບການພັກເຊົາ, ການປຸກລະດົມໃຫ້ບັນດາໂຮງແຮມເຂົ້າເປັນສະມາຊິກຂອງສະມາຄົມທຸລະກິດໂຮງແຮມ, ຊ່ວຍແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ພ້ອມທັງການແຈ້ງຂໍ້ມູນຂ່າວສານທີ່ກ່ຽວກັບການພັດທະນາບຸກຄະລາກອນທີ່ກ່ຽວຂ້ອງກັບທຸລະກິດໂຮງແຮມ. ຜົນຈາກການສຳຫຼວດຈາກທຸລະກິດໂຮງແຮມພົບວ່າ: ທຸລະກິດໂຮງແຮມມີຄວາມຄິດເຫັນຕໍ່ກັບດ້ານການຊີ້ນຳ-ນຳພາໃນລະດັບປານກາງ. ໂດຍສະເພາະແມ່ນດ້ານຄວາມເປັນປົກກະຕິປະຈຳຂອງການຊີ້ນຳ, ການປຶກສາຫາລືເຖິງແນວທາງການແກ້ໄຂບັນຫາ, ດ້ານການປະສານງານເຊິ່ງກັນ ແລະ ກັນ, ດ້ານການສົ່ງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ແລະ ການສົ່ງເສີມຄວາມຫຼາກຫຼາຍ.

4. ດ້ານການຄວບຄຸມເພື່ອໃຫ້ເປັນມາດຕະຖານ, ນະໂຍບາຍ, ລາຄາ ແລະ ການແຂ່ງຂັນ.

ອີງຕາມທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ຂອງພາກລັດຂັ້ນແຂວງແມ່ນຕິດພັນກັບການຄຸ້ມຄອງທຸລະກິດໂຮງແຮມລະດັບ 3 ດາວລົງມາ. ໃນນັ້ນ, ພາຍໃຕ້ນະໂຍບາຍທີ່ອີງຕາມຄວາມສະໝັກໃຈໃນການເຂົ້າຮ່ວມເປັນສະມາຊິກຍັງຖືວ່າຍັງມີຈຳນວນບໍ່ຫຼາຍເທື່ອສຳລັບຄວາມເປັນມາດຕະຖານໃນການກວດສອບຕາມຫຼັກການຂອງອາຊຽນ. ເນື່ອງຈາກວ່າທຸລະກິດລະດັບສາມດາວສ່ວນໃຫຍ່ແມ່ນເປັນເຈົ້າຂອງໂດຍຄົນລາວ ເຊິ່ງມີຂະໜາດ, ການຕົບແຕ່ງ, ຈຳນວນພະນັກງານ ແລະ ລະບົບການບໍລິຫານທີ່ແຕກຕ່າງຈາກທຸລະກິດໂຮງແຮມລະດັບ 4 ດາວທີ່ມີເຄືອຂ່າຍມາຈາກຕ່າງປະເທດ ແລະ ຂຶ້ນກັບການຄຸ້ມຄອງຂັ້ນກະຊວງ ແຕ່ຂອດການປະເມີນແມ່ນຂັ້ນແຂວງເປັນຂໍ້ວຕໍ່ໃນການຈັດຕັ້ງປະຕິບັດ. ໃນດ້ານການຄວບຄຸມລາຄາພາກລັດ

ແມ່ນຍັງເປັນໄປຕາມກົນໄກຕະຫຼາດທີ່ພາກລັດບໍ່ສາມາດຄວບຄຸມໄດ້. ສຳລັບດ້ານການແຂ່ງຂັນກໍ່ອີງຕາມກົນໄກຕະຫຼາດ ແລະ ຄວາມພໍໃຈຂອງລູກຄ້າ. ຈາກຜົນການສຳຫຼວດຄວາມຄິດເຫັນຂອງພາກທຸລະກິດໂຮງແຮມແມ່ນໃຫ້ຄວາມຄິດເຫັນຕໍ່ການຄຸ້ມຄອງຂອງພາກລັດໃນລະດັບຫຼາຍ. ໃນນັ້ນ, ຫຼາຍທີ່ສຸດແມ່ນດ້ານການຄວບຄຸມຄວາມມີມາດຕະຖານ, ດ້ານການປະຕິບັດຕາມລະບຽບທີ່ກຳນົດ, ດ້ານການປະຕິບັດຕາມນະໂຍບາຍ. ນອກນັ້ນ, ຄວາມຄິດເຫັນທີ່ມີລະດັບປານກາງແມ່ນດ້ານການແກ້ໄຂບັນຫາການແຂ່ງຂັນລະຫວ່າງທຸລະກິດໂຮງແຮມດ້ວຍກັນ ແລະ ດ້ານລາຄາທີ່ພັກແຮມ.

**ຄວາມຄິດເຫັນເພີ່ມເຕີມເພື່ອໃຫ້ເກີດຄວາມຍືນຍົງໃນການຄຸ້ມຄອງທຸລະກິດໂຮງແຮມຂອງພາກລັດ ໃນນະຄອນຫຼວງພະບາງ.**

- ການເຂົ້າເປັນສະມາຊິກຂອງສະມາຄົມທຸລະກິດທີ່ພັກແຮມຍັງເປັນສິ່ງຈຳເປັນສຳລັບການຄຸ້ມຄອງທຸລະກິດໂຮງແຮມຂອງພາກລັດ ເພື່ອທັງສະດວກໃນການຄຸ້ມຄອງ, ການໄດ້ຮັບຜົນປະໂຫຍດທາງດ້ານການຄຸ້ມຄອງ ແລະ ການເຂົ້າເຖິງຕະຫຼາດ ແລະ ການໂຄສະນາໄດ້ດີຂຶ້ນກວ່າເກົ່າ.
- ການເພີ່ມທະວີຄວາມຮູ້-ຄວາມເຂົ້າໃຈກ່ຽວກັບລະບຽບ ແລະ ຂໍ້ກຳນົດຕ່າງໆທີ່ກ່ຽວພັນໃຫ້ກັບທຸລະກິດໂຮງແຮມເພີ່ມຕື່ມ.
- ຂອດການປະສານງານດ້ານເອກະສານ ແລະ ການກຳນົດລາຄາຂະໜາດການໃຫ້ດາວຄວນໃຫ້ມີຄວາມຮັດກຸມກວ່າເກົ່າ.
- ຍັງບໍ່ມີຄວາມຊັດເຈນພຽງພໍໃນດ້ານການວາງແຜນ, ການຕິດຕາມປະເມີນຜົນ, ການນຳໃຊ້ເຄື່ອງມື, ການເພີ່ມມາດຕະການໃນການຄວບຄຸມທີ່ພຽງພໍໃນການບໍລິຫານຄຸ້ມຄອງທຸລະກິດໂຮງແຮມ
- ການສ້າງແຜນການກະຕຸ້ນກຸ່ມລູກຄ້າສະເພາະສຳລັບທຸລະກິດໂຮງແຮມຍັງເປັນສິ່ງຕ້ອງການ
- ຮຽກຮ້ອງໃຫ້ມີຄວາມຊັດເຈນທາງດ້ານຜົນປະໂຫຍດຮ່ວມກັນ, ການປະສານງານ ແລະ ການເອົາຈິງເອົາຈັງລະຫວ່າງສອງພາກສ່ວນ.
- ຮຽກຮ້ອງໃຫ້ໝູນໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຄຸ້ມຄອງ
- ສ້າງໜ່ວຍງານສະເພາະໃນການຄຸ້ມຄອງທີ່ເນັ້ນຄວາມຊຳນານດ້ານການຄຸ້ມຄອງທະລະກິດໂຮງແຮມຢ່າງໃກ້ຊິດ.
- ຄວນມີການກຳນົດໂຄງສ້າງທຸລະກິດໂຮງແຮມເພື່ອບໍ່ໃຫ້ມີຄວາມແຕກຕ່າງກັນຫຼາຍເກີນໄປ
- ເຜີຍແຜ່ ແລະ ສ້າງລະບຽບໃຫ້ມີຄວາມຮັດກຸມກວ່າເກົ່າ
- ໃຊ້ມາດຕະການການຄວບຄຸມທາງດ້ານລາຄາໃຫ້ເປັນມາດຕະຖານ
- ຂອດການຊີ້ນຳ-ນຳພາຢ່າງໃກ້ຊິດຍັງມີຄວາມຈຳເປັນສຳລັບທຸລະກິດໂຮງແຮມ
- ຄວນໃຫ້ມີຄວາມທັນການໃນການແກ້ໄຂບັນຫາທີ່ມັກເກີດໃນຂົງເຂດການບໍລິຫານຄຸ້ມຄອງໂຮງແຮມ.
- ເພີ່ມການສ້າງຂະບວນການທີ່ກ່ຽວຂ້ອງກັບການຮັກສາຄວາມເປັນສີຂຽວໃຫ້ຫຼາຍຂຶ້ນ
- ຕິດຕາມການຊີ້ນຳ-ນຳພາຢ່າງເປັນປົກກະຕິ
- ເພື່ອຫຼີກລ່ຽງບັນຫາການແຂ່ງຂັນພາຍໃນທຸລະກິດໂຮງແຮມດ້ວຍກັນເອງ ແລະ ເພື່ອໃຫ້ເກີດການກະຈາຍລາຍໄດ້ຢ່າງເໝາະສົມ.
- ສ້າງຄວາມເປັນເອກະພາບທາງດ້ານລາຄາໃນແຕ່ລະລະດັບມາດຕະຖານຂອງໂຮງແຮມ ໃນແຕ່ລະລະດູການທ່ອງທ່ຽວ
- ກວດສອບຄືນການລົງທຶນທຸລະກິດໂຮງແຮມຈາກຕ່າງປະເທດໂດຍແນໃສ່ຜົນປະໂຫຍດທີ່ຈະເກີດກັບຄົນທ້ອງຖິ່ນ.
- ຄຸ້ມຄອງສິ່ງເສດເຫຼືອຈາກບ້ານພັກ, ໂຮງແຮມ ແລະ ຮ້ານອາຫານໃຫ້ເກີດຄວາມເໝາະສົມ.

**ຂອບແນວຄວາມຄິດສຳລັບການບໍລິຫານຄຸ້ມຄອງທຸລະກິດໂຮງແຮມຂອງພາກລັດໃນນະຄອນຫຼວງພະບາງ**

ຄວາມຍືນຍົງຂອງການຄຸ້ມຄອງທຸລະກິດໂຮງແຮມຂອງພາກລັດໃນນະຄອນຫຼວງພະບາງໄດ້ຢູ່ 6 ດ້ານເຊິ່ງໄດ້ສົນທະນາເຖິງໂຕຊີ້ວັດທີ່ເປັນບູລິມະສິດສຳຄັນທີ່ໄດ້ຈາກການຄົ້ນຄວ້າໃນຄັ້ງນີ້ດັ່ງນີ້:

1. ເພື່ອເອົາຕົວລອດຈາກຄວາມຍືນຍົງໃນການແກ້ໄຂບັນຫາຢ່າງທັນການ ເພື່ອຮັບມືກັບບັນຫາທີ່ເກີດຈາກຄວາມທັນການໃນການແກ້ໄຂບັນຫາຢ່າງທັນກັບສະຖານະການທີ່ເກີດຂຶ້ນກັບທຸລະກິດໂຮງແຮມນັ້ນ. ປະການໜຶ່ງ, ຄວນຕ້ອງມີການເບິ່ງບັນຫາ ແລະ ວິເຄາະບັນຫາຢ່າງລະອຽດທາງດ້ານປັດໄຈສະພາບແວດລ້ອມອ້ອມຂ້າງເພື່ອພັດທະນາໃຫ້ເປັນຍຸດທະວິທີທີ່ຍືນຍົງໃນການແກ້ໄຂບັນຫາ. ເຊິ່ງຕ້ອງໄດ້ພິຈາລະນາປັດໄຈທັງສອງດ້ານບໍ່ວ່າຈະເປັນພາຍໃນ ແລະ ພາຍນອກ. ເມື່ອຍຸດທະສາດທີ່ເປັນຈຸດປະສົງ ແລະ ເປົ້າໝາຍໄດ້ຖືກກຳນົດຂຶ້ນແລ້ວຈຶ່ງໃຊ້ວິທີການຕັດສິນໃຈທາງຍຸດທະສາດ. ແລ້ວຈຶ່ງສາມາດລະບຸຄຳຖາມທີ່ກໍ່ໃຫ້ເກີດຄວາມຍືນຍົງກ່ຽວກັບສິ່ງທ້າທາຍ ແລະ ບັນຫາທີ່ເກີດຂຶ້ນໄດ້.

2. ເພີ່ມຄວາມປະສານງານຮ່ວມມືລະຫວ່າງພາກລັດ ແລະ ທຸລະກິດໂຮງແຮມຢ່າງເຂັ້ມແຂງ ເພື່ອເປັນການເພີ່ມຄວາມປະສານງານຮ່ວມມືກັນລະຫວ່າງພາກລັດ ແລະ ທຸລະກິດໂຮງແຮມນັ້ນ. ປະການທີໜຶ່ງ, ຄວນຕ້ອງມີການອອກແບບວິທີການເຮັດວຽກຮ່ວມກັນ ໂດຍເນັ້ນຂະບວນການ

ຮ່ວມມືໃດ້ແກ່: ການສ້າງຄວາມເຊື່ອໝັ້ນ, ການສ້າງຄວາມມຸ່ງໝັ້ນທີ່ຈະເຮັດວຽກຮ່ວມກັນ, ແລະ ການສ້າງຄວາມເຂົ້າໃຈຮ່ວມກັນ ແລະ ການປຶກສາຫາລືວຽກງານແບບເຊິ່ງໜ້າ.

3. ປູກຈິດສຳນຶກເພື່ອໃຫ້ທຸລະກິດໂຮງແຮມເຫັນຄວາມສຳຄັນຂອງການຄຸ້ມຄອງຂອງພາກລັດ ໂດຍວິທີການປູກຈິດສຳນຶກໃຫ້ທຸລະກິດໂຮງແຮມເຫັນຄວາມສຳຄັນນັ້ນ. ປະການສຳຄັນ, ພາກລັດຈຳເປັນຕ້ອງໄດ້ເນັ້ນວິທີການອອກແບບວຽກງານການຄຸ້ມຄອງທຸລະກິດໂຮງແຮມໃຫ້ຊັດເຈນເພື່ອເນັ້ນໃຫ້ທຸລະກິດເຫັນໄດ້ເຖິງຄວາມສຳຄັນໃນການໃຫ້ການມີສ່ວນຮ່ວມໄດ້ຖືກຕ້ອງຕາມແຜນຍຸດທະສາດການຄຸ້ມຄອງວຽກງານທີ່ວາງໄວ້ໄດ້ໃຫ້ດີຂຶ້ນຕື່ມ.

4. ພັດທະນາບຸກຄະລາກອນພາກລັດໃນແງ່ຄວາມຊ່ຽວຊານທາງດ້ານການຄຸ້ມຄອງທຸລະກິດຢ່າງພຽງພໍເພື່ອເພີ່ມໃຫ້ການບໍລິຫານຄຸ້ມຄອງພາກລັດໃຫ້ມີຄວາມຊ່ຽວຊານຂຶ້ນນັ້ນ ພາກລັດຈຳເປັນຕ້ອງພິຈາລະນາຂອດທີ່ກ່ຽວຂ້ອງກັບເງື່ອນໄຂເລີ່ມຕົ້ນ ໂດຍເນັ້ນການສ້າງຄວາມເທົ່າທຽມກັນທາງດ້ານຄວາມຮູ້ຂອງພະນັກງານທີ່ເຂົ້າຮ່ວມໃນຂະບວນການຈັດຕັ້ງປະຕິບັດໃຫ້ມີທັກສະທີ່ເໝາະສົມກັບທຸລະກິດໂຮງແຮມ, ສ້າງແຮງຈູງໃຈໃຫ້ພະນັກງານທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງກັບໜ້າວຽກທີ່ເຂົາເຈົ້າຮັບຜິດຊອບໃຫ້ເກີດຄວາມຊຳນິຊຳນານ. ປະການທີສອງ, ການເພີ່ມ ແລະ ພັດທະນາບຸກຄະລາກອນສະເພາະດ້ານທີ່ກ່ຽວຂ້ອງກັບການບໍລິຫານຄຸ້ມຄອງໃຫ້ພຽງພໍເພີ່ມຫຼາຍຂຶ້ນ.

5. ທົບທວນການກວດສອບມາດຕະຖານອາຊຽນກັບທຸລະກິດໂຮງແຮມໃນຂັ້ນສາມດາວລົງມາ ເພື່ອແກ້ໄຂບັນຫາວຽກງານການຄຸ້ມຄອງວຽກງານກ່ຽວກັບບໍລິຫານຄຸ້ມຄອງທຸລະກິດໂຮງແຮມນັ້ນ. ປະການທີ່ໜຶ່ງ, ພາກລັດຕ້ອງພິຈາລະນາຂອດການວາງແຜນ, ການຈັດຕັ້ງອົງກອນ, ການຊີ້ນຳ-ນຳພາ ແລະ ການຄວບຄຸມ ໃນການຈັດຕັ້ງປະຕິບັດເພີ່ມທະລີຂຶ້ນຕື່ມ ເພື່ອໃຫ້ການບໍລິຫານຄຸ້ມຄອງມີຄວາມທົ່ວເຖິງ.

6. ຄວາມຮັດກຸມທາງດ້ານການວາງຂອບ POLC ທີ່ຊັດເຈນ ເພື່ອເຮັດໃຫ້ຂອບ POLC ທີ່ຊັດເຈນນັ້ນ ພາກລັດຈຳເປັນຕ້ອງກຳນົດວິໄສທັດ, ຈຸດປະສົງ, ເປົ້າໝາຍ ແລະ ນະໂຍບາຍການຄຸ້ມຄອງທຸລະກິດໂຮງແຮມໃຫ້ມີຄວາມຊັດເຈນ ເພື່ອໃຫ້ການປະສານງານລະຫວ່າງພາກລັດກັບທຸລະກິດໂຮງແຮມໃຫ້ມີຄວາມຕໍ່ເນື່ອງ ແລະ ເປັນປົກ ກະຕິ.

**ສົນທະນາ**

ໃນບົດການສຶກສານີ້ໄດ້ນຳໃຊ້ກອບຄວາມຄິດຕາມ Luther Gulick (1892) ໂດຍນຳສະເໜີແນວຄິດຂະບວນການບໍລິຫານ ເຊິ່ງເປັນທີ່ຮູ້ຈັກກັນດີວ່າ “POSDCoRB” ແລະ ແນວຄວາມຄິດຕາມ POLC ແລະ ຕາມທິດສະດີກ່ຽວກັບການປະສານງານຮ່ວມມືຂອງ Ansell (2008) ເຊິ່ງຜົນການສຶກສາພົບວ່າ: ການປະສານຮ່ວມມືກັນລະຫວ່າງພາກລັດ ແລະ ພາກທຸລະກິດໍາຮງແຮມທຸກພາກສ່ວນມີຄວາມຈຳເປັນຍິ່ງໃນການເຂົ້າມາມີບົດບາດທາງດ້ານການຮ່ວມມືກັນເພື່ອຈັດຕັ້ງປະຕິບັດຕາມແຜນການ, ການຈັດອົງກອນ, ການຊີ້ນຳ-ນຳພາ ແລະ ການຄວບຄຸມ ທີ່ທາງພາກລັດ ແລະ ພາກທຸລະກິດໄດ້ວາງແຜນໄວ້ຮ່ວມກັນ. ໃນນີ້, ຂອດດ້ານການວາງແຜນແມ່ນ ຈຳເປັນຍິ່ງແມ່ນຂອດການຕິດຕາມແຜນທີ່ໄດ້ວາງໄປແລ້ວນັ້ນຄືນວ່າຍັງຄ້າງຄາຂອດໃດ. ນອກນັ້ນ, ຂອດການຊີ້ນຳ-ນຳພາ ເປັນປັດໄຈທ້າທາຍຍິ່ງເນື່ອງຈາກວ່າເມື່ອສົມທຽບກັບມາດຕະຖານອາຊຽນ, ພາກພື້ນ ແລະ ໃນໂລກທາງດ້ານມາດຕະຖານທີ່ພັກແຮມຄວາມຈຳເປັນທີ່ສຸດແມ່ນບຸກຄະລາກອນພາກລັດທີ່ພຽງພໍຕໍ່ການລົງໄປຊີ້ນຳວຽກທີ່ເປັນມາດຕະຖານ, ການແກ້ໄຂບັນຫາ ເຊິ່ງຮຽກຮ້ອງໄປເຖິງຄວາມເປັນຊ່ຽວຊານຂອງບຸກຄະລາກອນສະເພາະດ້ານການໂຮງແຮມ ແລະ ແກ້ໄຂບັນຫາທີ່ມັກເກີດຂຶ້ນໃຫ້ແກ່ໂຮງແຮມ. ສຳລັບດ້ານການຄວບຄຸມພາກລັດມີຄວາມທ້າທາຍໃນເລື່ອງການຈະເຮັດແນວໃດເພື່ອບໍ່ໃຫ້ເກີດຄວາມຫູດໂຕນກັນທາງດ້ານການແຂ່ງຂັນລະຫວ່າງທຸລະກິດເອງ ເພື່ອຫັນການແຂ່ງຂັນໃຫ້ກາຍເປັນຄວາມຮ່ວມໄມ້ຮ່ວມມືກັນເພື່ອແຂ່ງກັບພາຍນອກ ເປັນການປົກປ້ອງອຸດສາຫະກຳພາຍໃນ ລວມໄປເຖິງການແຂ່ງຂັນທາງດ້ານລາຄາໃນແຕ່ລະລະດູການທ່ອງທ່ຽວ.

ເມື່ອສົມທຽບຕີລາຄາເບິ່ງແລ້ວສາມາດສະຫຼຸບໄດ້ວ່າ: ການຄຸ້ມຄອງພາກລັດໃນຂະແໜງທຸລະກິດທີ່ພັກແຮມແມ່ນມີລັກສະນະແບບປະສົມປະສານ, ມີຄວາມທັນສະໄໝໄປຕາມການປ່ຽນແປງຂອງອາຊຽນ, ພາກພື້ນ ແລະ ໃນໂລກເຊິ່ງກົງກັບແນວຄວາມຄິດທິດສະດີທີ່ (Peters and Pierre, 1998; Pierre and Peters, 2000) ໄດ້ນຳສະເໜີໄວ້ດ້ານໜັ່ນແໜງຄວາມຄິດໃໝ່ທາງການບໍລິຫານປະກອບດ້ວຍຮູບແບບການປະສົມ ແລະ ວິທີການປັບປຸງໃໝ່ ສຳລັບຮູບແບບການບໍລິຫານແບບຄລາສສິກ.

## 5. ຂໍ້ສະເໜີຈາກການຄົ້ນຄວ້າ

ເພື່ອໃຫ້ມີຄວາມຍືນຍົງໃນການຄຸ້ມຄອງທຸລະກິດໂຮງແຮມໃນເມືອງຫຼວງພະບາງ ພາກລັດຄວນສ້າງທີມລົງເກັບກຳຂໍ້ມູນປະເມີນຜົນການຈັດຕັ້ງປະຕິບັດການຄຸ້ມຄອງທຸລະກິດໂຮງແຮມໃນແຕ່ລະໄລຍະຕາມຄວາມເໝາະສົມ. ນອກນັ້ນ, ພາກລັດຈຳເປັນຕ້ອງເພີ່ມປະລິມານ ແລະ ຄຸນະພາບທີ່ລົງເລິກໄປທາງດ້ານຊ່ຽວຊານສະເພາະດ້ານໃນຂະແໜງໂຮງແຮມເພື່ອສາມາດລົງໃກ້ຊິດຕິດແທດກັບການປະຕິບັດວຽກຕົວຈິງກັບແຕ່ລະໂຮງແຮມ ແລະ ພະຍາ ຍາມຜັກດັນໃຫ້ເກີດການປະສານຮ່ວມມືລະຫວ່າງພາກທຸລະກິດເອງເພື່ອຫຼີກເວັ້ນປະກົດການແຂ່ງຂັນພາຍໃນລະຫວ່າງກັນໂດຍສະເພາະແມ່ນເລື່ອງການກຳນົດລາຄາທີ່ພັກແຮມ. ສຸດທ້າຍ, ການຈັດມາດຕະຖານໂຮງແຮມແມ່ນຂຶ້ນກັບຂັ້ນ

ກະຊວງ ແລະ ຂັ້ນແຂວງ ສະນັ້ນເຮັດໃຫ້ການຄຸ້ມຄອງເບິ່ງເປັນລັກສະນະກະຈາຍ ແລະ ມີລັກສະນະຈຳ ກັດ.

**6. ຄຳຂອບໃຈ**

ການຄົ້ນຄວ້າໃນຫົວຂໍ້: "ການຄຸ້ມຄອງການໃຫ້ບໍລິການທຸລະກິດໂຮງແຮມ ໃນນະຄອນຫຼວງພະບາງ" ແມ່ນໂຄງການຄົ້ນຄວ້າທີ່ໄດ້ຮັບການສະໜັບສະໜູນທຶນຄົ້ນຄວ້າວິທະຍາສາດຈາກມະຫາວິທະຍາໄລສຸພານຸວົງ ງົບປະມານລັດປະຈຳປີ 2018.

ທີມງານຜູ້ຄົ້ນຄວ້າຂໍສະແດງຄວາມເຄົາລົບນັບຖື ແລະ ຮູ້ບຸນຄຸນດ້ວຍຄວາມຈິງໃຈມາຍັງມະຫາວິທະຍາໄລສຸພານຸວົງ ໂດຍສະເພາະແມ່ນຄະນະອະທິການບໍດີມະຫາວິ ທະຍາໄລສຸພານຸວົງ ແລະ ຄະນະບໍດີຄະນະເສດຖະສາດ ແລະ ການທ່ອງທ່ຽວທີ່ໄດ້ໃຫ້ການສະຫນັບສະຫນູນ, ໃຫ້ ຄຳແນະນຳ ແລະ ໃຫ້ຄຳປຶກສາທີ່ເປັນປະໂຫຍດຕໍ່ການ ຄົ້ນຄວ້າຄັ້ງນີ້ລວມທັງຜູ້ປະກອບທຸລະກິດໂຮງແຮມ, ພາກລັດ ແລະ ເອກະຊົນ ທີ່ໃຫ້ການຮ່ວມມືໃນການປະກອບຂໍ້ມູນທີ່ເປັນປະໂຫຍດຕໍ່ການຄົ້ນຄວ້າຄັ້ງນີ້ປະສົບຜົນສຳເລັດຕາມຈຸດປະສົງ ແລະ ຂໍຂອບໃຈມາຍັງບັນດາອາຈານ, ຄອບ ຄົວ ແລະ ຄະນະຜູ້ຄົ້ນຄວ້າທີ່ເປັນສ່ວນສຳຄັນເຮັດໃຫ້ບົດຄົ້ນຄວ້າສະບັບນີ້ມີຄວາມສົມບູນ ແລະ ບັນລຸຕາມເປົ້າໝາຍທີ່ໄດ້ຕັ້ງໄວ້.

**7. ເອກະສານອ້າງອີງ**

Ansell (2008) Collaborative Governance in theory. Journal of public Administration Theory.

Chalekian, P. 2013. POSDCORB: Core Patterns of Administration – Proceedings of the 20th Conference on Pattern Languages of Programs, PLoP'13 (December 2013), 20 pages.

Hood C (1991) A public management for all seasons? Public Administration 69(1): 3–19. Niñerola, Angels, María-Victoria Sánchez-Rebull, and Ana-Beatriz Hernández-Lara. 2019. Tourism research on Sustainability: A bibliometric analysis. Sustainability 11: 1377.

Osborne D and Gaebler T (1992) Reinventing Government: How the Entrepreneurial Spirit is Transforming the Public Sector. Reading, MA: Addison-Wesley.

Peters BG (2000) Four Main Administrative Traditions. Washington, DC: World Bank. Available at: http://go.worldbank.org/8W85CKFC80 Lampropoulou and Oikonomou 119

Peters BG and Pierre J (1998) Governance without government? Rethinking public administration. Journal of Public Administration Research and Theory 8(2): 223–243.

Pollitt C (1990) Managerialism and the Public Service: The Anglo-American Experience. Cambridge, MA: Basil Blackwell.

Vinay Kumar, A., & Rajeev, V. (2 013). POSDCORB: A Managerial Overview. PARIPEX – Indian Journal of Research. Volume: 3 Issue: 4 May 2013 ISSN - 2250-1991., P. 248 - 250.

Carmen. F., Margarita, P., & Marta, J. (2018). How to Carry out the Transition towards a More Circular Tourist Activity in the Hotel Sector. The Role of Innovation. International Review of Administrative Sciences, Vol. 84(1) 101-121.